ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສຳເລັດກອງປະຊຸມໃຫຍ່ຄັ້ງທີ II ໜ່ວຍພັກກົມຄຸ້ມຄອງສະຖາບັນການເງິນ




ກອງປະຊຸມໃຫຍ່ ສະມາຊິກພັກ ຄັ້ງທີ II ໜ່ວຍພັກກົມຄຸ້ມຄອງສະຖາບັນການເງິນທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ສຳເລັດລົງດ້ວຍໝາກຜົນອັນຈົບງາມໃນວັນທີ 18 ກຸມພາ 2020 ທີ່ຫ້ອງປະຊຸມໃຫຍ່ ທຫລ ນະຄອນຫຼວງວຽງຈັນ ພາຍໃຕ້ການເປັນປະທານຂອງສະຫາຍ ອາລຸນ ບຸນຍົງ ເລຂາໜ່ວຍພັກ-ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ພຸດທະໄຊ ສີວິໄລ ຄະນະປະຈຳພັກ ທຫລ-ຮອງຜູ້ວ່າການ ທຫລ; ສະຫາຍ ພານຸສັກ ແກ່ນວົງພະຈັນ ຄະນະພັກ ທຫລ, ຫົວໜ້າກົມຈັດຕັ້ງແລະພະນັກງານ ທຫລ, ພ້ອມນີ້ ກໍ່ມີບັນດາສະຫາຍຜູ້ຕາງໜ້າໜ່ວຍພັກ ແລະ ສະມາຊິກພັກເຂົ້າຮ່ວມ.

ໃນກອງປະຊຸມ; ສະຫາຍ ອາລຸນ ບຸນຍົງ ເລຂາໜ່ວຍພັກ ໄດ້ນຳສະເໜີບົດລາຍງານການເມືອງ ຊຶ່ງໜ່ວຍພັກໄດ້ຮັບການສ້າງຕັ້ງຂຶ້ນໃນທ້າຍ ປີ 2010 ມີບົດບາດໜ້າທີ່ເປັນເສນາທິການໃຫ້ແກ່ຄະນະພັກ-ຄະນະຜູ້ວ່າການ ທຫລ ໃນການຊີ້ນຳ-ນຳພາວຽກງານຄຸ້ມຄອງຕິດຕາມກວດກາຄວາມໝັ້ນຄົງ ແລະ ຍືນຍົງຂອງບັນດາສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທຫລ; ປະຈຸບັນມີສະມາຊິກພັກທັງໝົດ 17 ສະຫາຍ ແລະ ໃນຕະຫຼອດໄລຍະ 5 ປີແຫ່ງການຊີ້ນຳ-ນຳພາໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ I ໂດຍໄດ້ຮັບການຊີ້ນຳຢ່າງໃກ້ຊິດຈາກຄະນະພັກ-ຄະນະຜູ້ວ່າການ ທຫລ, ຄະນະໜ່ວຍພັກ ຍາມໃດກໍ່ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ຖັນແຖວພະນັກງານ-ສະມາຊິກພັກເປັນບັນຫາສຳຄັນຕົ້ນຕໍດ້ວຍຫຼາຍຮູບການ ພ້ອມທັງຖືເອົາວຽກງານນີ້ສອດຫ້ອຍເຂົ້າໃນທຸກການເຄື່ອນໄຫວວຽກງານຕົວຈິງ ອັນເຮັດໃຫ້ສະພາບແນວຄິດຂອງທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ, ມີການຫັນປ່ຽນທີ່ຕັ້ງໜ້າກວ່າເກົ່າມີສະຕິຕໍ່ການຈັດຕັ້ງຫ້າວຫັນໃນການປະຕິບັດວຽກງານຢ່າງເປັນເຈົ້າການ ແລະ ມີຜົນສຳເລັດເປັນຢ່າງດີ.







ຄະນະໜ່ວຍພັກໄດ້ນຳພາສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງສະຖາບັນການເງິນສ້າງເງື່ອນໄຂອຳນວຍຄວາມສະດວກໃນການລະດົມສະຖາບັນການເງິນນອກລະບົບທີ່ບໍ່ທັນຖືກຕ້ອງທັນເຂົ້າສູ່ລະບົບ ແລະ ອອກອະນຸຍາດສ້າງຕັ້ງສະຖາບັນການເງິນໃໝ່ເພີ່ມຂຶ້ນທາງດ້ານປະລິມານ-ຄຸນນະພາບ ຈຳນວນ 60 ແຫ່ງປະຕິບັດໄດ້ 100%, ປະຈຸບັນສະຖາບັນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທຫລ ມີທັງໝົດ 177 ແຫ່ງ; ເຜີຍແຜ່ຄວາມຮູ້ພື້ນຖານທາງດ້ານການເງິນໃຫ້ຫຼາຍພາກສ່ວນ ລວມທັງສະຖາບັນການສຶກສາ 54 ຄັ້ງ ມີຜູ້ເຂົ້າຮ່ວມຫຼາຍກວ່າ 16.200 ເທື່ອຄົນ; ສຳເລັດການຈັດຝຶກອົບຮົມສຳມະນາ 80 ກວ່າຄັ້ງ ມີຜູ້ເຂົ້າຮ່ວມ 9.106 ເທື່ອຄົນ; ຕິດຕາມກວດກາ ແລະ ແກ້ໄຂສະພາບປະກົດການຫຍໍ້ທໍ້ໃນທົ່ວລະບົບສະຖາບັນການເງິນທີ່ໄດ້ຮັບອະນຸຍາດຈາກ ທຫລ ຢ່າງເຂັ້ມງວດ 115 ແຫ່ງ, ລົງກວດກາສຸກເສີນສະຖາບັນການເງິນທີ່ມີຄວາມສ່ຽງໃນການດຳເນີນງານ 12 ແຫ່ງ; ແກ້ໄຂສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ 2 ແຫ່ງທີ່ມີບັນຫາໂດຍສະເໜີຂັ້ນເທິງແຕ່ງຕັ້ງຄະນະສະເພາະກິດລົງຕິດຕາມຢ່າງໃກ້ສິດ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການແກ້ໄຂຊຳລະສະສາງໄປຕາມລະບຽບຫຼັກການ ແລະ ລາຍງານຂໍທິດຊີ້ນຳຈາກຂັ້ນເທິງຢ່າງເປັນປົກກະຕິ.

ພ້ອມດຽວກັນ, ຄະນະໜ່ວຍພັກໄດ້ນຳພາພັດທະນາລະບົບບໍລິຫານສະຖາບັນການເງິນ ໂດຍການຫັນໄປສູ່ທັນສະໄໝ; ສ້າງ ແລະ ພັດທະນານິຕິກຳ; ພັດທະນາລະບົບການບໍລິຫານ ແລະ ກໍ່ສ້າງພື້ນຖານໂຄງລ່າງ; ເປັນເຈົ້າການລະດົມທຶນຊ່ວຍເຫຼືອລ້າຈາກສາກົນໂຄງການ MRA-AFP 8,592 ລ້ານເອີໂຣ ແຕ່ປີ 2015-2018 ແລະ ສືບຕໍ່ໂຄງການໄລຍະ 5 ແຕ່ປີ 2019-2021 ມີ 4 ລ້ານເອີໂຣ; ສ້າງເງື່ອນໄຂ ແລະ ຊ່ວຍເຫຼືອທາງດ້ານວິຊາການໃນການຫັນກອງທຶນຈຳນວນໜຶ່ງມາເປັນສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດຢ່າງເຕັມຮູບແບບປະຕິບັດໄດ້ 100% ແລະ ມາຮອດເດືອນກັນຍາ 2019 ມີທະນາຄານບ້ານທີ່ຢູ່ພາຍໃຕ້ການສະໜັບສະໜູນຂອງໂຄງການ 712 ກອງທຶນບ້ານ, ມີສະມາຊິກທັງໝົດ 106.885 ບັນຊີ, ຍອດເງິນຝາກ 315 ຕື້ກວ່າກີບ ມີຍອດເງິນກູ້ 288 ຕື້ກວ່າກີບສາມາດຮັກສາໜີ້ບໍ່ເກີດດອກອອກຜົນ ສະເລ່ຍຂອງທະນາຄານບ້ານຢູ່ໃນລະດັບ 3,43% ຂອງຍອດສິນເຊື່ອທັງໝົດ. ຄຽງຄູ່ກັບຜົນສຳເລັດທີ່ຍາດມາໄດ້ນັ້ນ, ໜ່ວຍພັກຍັງມີຂໍ້ຄົງຄ້າງຈຳນວນໜຶ່ງທີ່ໄດ້ຮັບການປັບປຸງແກ້ໄຂ; ກອງປະຊຸມຍັງຜ່ານທິດທາງ ແລະ ໜ້າທີ່ຕົ້ນຕໍໃນໄລຍະ 5 ປີຕໍ່ໜ້າຕື່ມອີກ.

ບັນດາຜູ້ແທນກອງປະຊຸມຍັງໄດ້ຕັ້ງໜ້າປະກອບຄຳຄິດຄຳເຫັນຢ່າງຕົງໄປຕົງມາ, ພາວະວິໄສ ແລະ ມີປະຊາທິປະໄຕ ເພື່ອເຮັດໃຫ້ບົດລາຍງານການເມືອງ ແລະ ທິດທາງລວມ, ແຜນການໃນຕໍ່ໜ້າມີຄວາມສົມບູນຍິ່ງໆຂຶ້ນ ແລະ ໃນເວລາຕໍ່ມາກໍ່ໄດ້ປ່ອນບັດເລືອກຕັ້ງເອົາຄະນະໜ່ວຍພັກຊຸດໃໝ່ ໂດຍແມ່ນສະຫາຍອາລຸນ ບຸນຍົງ ໄດ້ຮັບການເລືອກຕັ້ງເປັນເລຂາໜ່ວຍພັກ; ສະຫາຍ ວິໄລມິດ ອັກຄະວົງ ເປັນຮອງເລຂາ ແລະ ສະຫາຍ ພັນທະບູນ ໄຊຍະເພັດ ເປັນຜູ້ກວດກາໜ່ວຍພັກ ແລະ ກອງປະຊຸມ ຍັງໄດ້ເລືອກເອົາຜູ້ແທນສົມບູນ 4 ສະຫາຍ ແລະ ສຳຮອງ 1 ສະຫາຍເຂົ້າຮ່ວມກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກ ທຫລ ທີ່ຈະເປີດຂຶ້ນໃນຕໍ່ໜ້ານີ້.

ຈາກນັ້ນ; ສະຫາຍ ຮອງເລຂາຄະນະພັກ ທຫລ ໄດ້ຕີລາຄາສູງຕໍ່ການຊີ້ນຳ-ນຳພາໃນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາຂອງຄະນະໜ່ວຍພັກ-ສະມາຊິກ ແລະ ພະນັກງານຂອງກົມຄຸ້ມຄອງສະຖາບັນການເງິນໃນຜ່ານມາ ແລະ ຍັງເນັ້ນໃຫ້ເສີມຂະຫຍາຍຜົນງານທີ່ພົ້ນເດັ່ນ; ສືບຕໍ່ສຶກສາອົບຮົມທາງດ້ານການເມືອງ-ແນວຄິດ ແລະ ຄວາມສາມັກຄີໃຫ້ດີຂຶ້ນກວ່າເກົ່າ; ເພີ່ມສະຕິລະວັງຕົວໃນການຕ້ານ ແລະ ສະກັດກັ້ນທຸກກົນອຸບາຍຂອງພວກຄົນບໍ່ດີກໍ່ຄືປະກົດການຫຍໍ້ທໍ້ບໍ່ໃຫ້ເກີດຂຶ້ນ; ສືບຕໍ່ເພີ່ມທະວີນ້ຳໃຈເສຍສະຫຼະເພື່ອຜົນປະໂຫຍດລວມຂອງຊາດ, ຂອງລວມໝູ່ໃຫ້ສູງ ພ້ອມທັງຍົກສູງຈິດໃຈປະຢັດ ແລະ ຈົ່ງພ້ອມກັນນຳເອົາເນື້ອໃນຈິດໃຈມະຕິກອງປະຊຸມໃຫຍ່ຄັ້ງນີ້ ໄປຈັດຕັ້ງຜັນຂະຫຍາຍໃຫ້ປະກົດຜົນເປັນຈິງ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**